# Announcement on ANZ's Retail products and services in Laos

## Key information

- On 8 February 2018, ANZ Bank (Lao) Limited announced that it will close its Laos' Retail products and services to focus on Institutional Banking in Laos.
- This decision is in line with ANZ's strategic priority to simplify the Bank and improve capital efficiency, and allows the bank to focus its resources on Institutional Banking in Laos as part of its Asia strategy.
- This closure in no way impacts our Institutional business in Laos. We have a successful history in Laos and remain fully committed to our Institutional business here.
- ANZ will continue to provide international products and standards to Laos to service the region's top Multi-National and Large Local Corporates.
- In accordance with Bank of Lao PDR's (BOL) latest advise on 7$^{th}$ September 2018, all the remaining retail accounts post retail product and service closure from 30$^{th}$ March 2018 will be remained under ANZ Laos' Administration only until 30$^{th}$ March 2021. After that, all remaining balance from the Retail Accounts would be transferred to Bank of Lao P.D.R, where customers would not be eligible to withdraw back the money. We would like to remind all remaining retail account holders with ANZ Laos to contact ANZ via +856 21 222 700 or Clientservices.laos@anz.com and visit our ANZ Service Counter located at ANZ Laos Commercial Building, 33 Lane Xang Avenue, Hatsady village, Chanthabury district, Vientiane Capital, Lao PDR to proceed your account closure.
- This follows the announcement in October 2016 of the sale of ANZ's retail and wealth business in five Asian countries to DBS. Since then, ANZ has also exited its retail business in Vietnam and the Philippines.

## Frequently Asked Questions

1. **Are any other parts of the ANZ Laos business being closed?**

   No, we will only close the retail products and services in Laos.

2. **Is ANZ exiting Laos?**

   No, ANZ remains fully committed to its Institutional Business in Laos. ANZ will continue to provide international products and standards to Laos to service the region's top Multi-National and Large Local Corporates.

3. **How will the closure of ANZ Retail Products and Services in Laos impact my banking?**

   The last day of service for ANZ's Retail Products and Services in Laos will be on Friday, 30 March 2018. You are advised to make alternative banking arrangements as soon as possible before **23 March 2018** to ensure that your banking needs are

addressed. However, for your convenience, we can help to connect you with a representative at Banque pour le Commerce Exterieur Lao Public (BCEL) should you wish to explore their range of banking products and services.

In order to provide you with quick and smooth services we encourage you to book an appointment by contacting us at +856 30 7738434-8 or e-mail to Clientservices.Laos@anz.com

Details on ANZ Service availability in the lead up to our last day of service:

| Date | Services not available |
|---|---|
| 23 March 2018<br>(from 5:00pm) | Cash Deposits, Cheques Deposits, Inward and Outward remittance requests will no longer be accepted.<br><br>Outward remittance instructions after 23 March 2018 will be limited to the disbursement of outstanding deposit balances to close the accounts.<br><br>Customer's Standing instructions will no longer be processed.<br><br>Safety deposit service will no longer available |
| 23 March 2018<br>(from 5.00pm) | ANZ ATM Cash withdrawal will not be available.<br><br>ANZ Visa Debit card will be decommissioned. |
| Friday, 30 March 2018<br>(from 5.00pm) | ANZ Laos Retail Banking business' last day of service will be 30 March 2018 |

**Note:** ANZ will receive payment instructions such as cash withdrawals, requests for lump sum outward remittance until 5.00pm, 30 March 2018.

Your ID card, Passport, or Family book will be required for account closure process.

4. **Is ANZ selling its retail business to BCEL?**

   No. We are closing our retail products and services. Our arrangements with BCEL aim to provide our retail customers with convenience and to minimize disruptions to their retail banking services.

5. **What will happen to my Term Deposit accounts?**

   Our ANZ Relationship Managers/ Officers will contact you to obtain your maturity instructions. You may terminate your Term deposit prior to maturity date without penalty or charges.

   The interests will be paid until the closure date of your Term Deposit account.

Existing Term Deposits will no longer be renewed from 08 February 2018. New Term Deposit applications will no longer be accepted from 08 February 2018.

6. **What should I do if I am expecting funds to be deposited or remitted into my deposit accounts with ANZ?**

   If you are expecting credits /inward remittance / deposits into any of your deposit accounts, please notify the sender (ie. your counterparty, supplier, relative) that funds must be received by ANZ before 23 March 2018. ANZ will no longer process credits/ inward payments into your accounts from 5.00pm, 23 March 2018.

   We recommend that you advise your counterparties to remit their payment to your account with another bank. Please advise them of the change in your bank information as early as possible.

7. **Can I still use my ANZ cheques? What should I do if I issued Post Dated cheques?**

   ANZ cheques issued from individual banking accounts will be processed until 5.00pm, 30 March 2018.

   If you are closing your account earlier than 30 March 2018 and have issued cheques /post- dated cheques that have not been banked in for deposit, please contact your Payees and replace them with another cheques drawn from another bank.

   Please return all cheques books when you close your account.

8. **Can I still withdraw cash from ANZ ATM?**

   ANZ ATM Cash withdrawal will not be available after 5.00pm, 23 March 2018.

   Please visit the Branch for cash withdrawal before 5.00pm, 30 March 2018.

9. **Can I still use my ANZ VISA Debit card? How about annual VISA fee that I have paid?**

   ANZ VISA Debit card will no longer available after 5.00pm, 23 March 2018.

   Your annual VISA fee for the remaining period will be credited to your account and please close your bank account by visiting our Vientiane Branch at Lane Xang Avenue before 5.00pm - Friday, 30 March 2018.

10. **I have Standing Instructions or recurring payment requests with ANZ. Will ANZ still process my standing instructions?**

    ANZ will no longer process your standing instructions from 23 March 2018. Please make alternative banking arrangements for your payment requirements.

11. **What alternative modes of payment will be available when I close my account/s at ANZ?**

You may select from the following modes of payment: Telegraphic transfer, Local transfer, or Cash.

Please be informed that cash withdrawals in excess of LAK 80,000,000 or its foreign currency equivalent will require at least 24 hours prior notice.

We will waive the payment fee for payments made to self-named accounts via telegraphic transfer, local transfer.

Note: all requested transactions & supports documents need to comply with central bank's regulations and ANZ Laos banking terms and conditions.

12. **Why I have to close my account before 23 March 2018 while your last day of Retail products and services is 30 March 2018?**

We need the buffer time to process on ceasing electronic banking services, payments requested, cheques and other services related to your account.

13. **How can we contact ANZ Retail Branch?**

You can visit our Retail Banking Branch at 33 Lane Xang Avenue, Hatsady village Chanthabury district, Vientiane Capital, Lao PDR.

We acknowledged this is an importance announcement and hence assure we will take every step to provide for smooth services by extending our banking hours to **5.00pm** on Monday to Friday and including opening on Saturday from **9.00am** to **1.00pm** until **30 March 2018:**

| **Extended Branch service hours** | **Services available** | **Remarks** |
|---|---|---|
| Monday - Friday | | |
| 8.30am to 5.00pm | Teller transactions including cash, cheques, payment instructions.<br><br>Proceed for closing bank account<br><br>Other non-teller transactions | Current cut-off times will remain unchanged. Any transactions normally subject to cut-offs will be received and processed the next banking day. |
| Saturday | | |
| 9.00am to 1.00pm | Teller transactions including cash, cheques, payment instructions and | Telegraphic transfer inward-outward to be processed in the next business day |

| | | |
|---|---|---|
| | other non-teller transactions.<br>Proceed for closing bank account | |

You can also email us at Clientservices.Laos@anz.com or call +856 21 222700

14. **What would happen if I do not want to proceed for account closure?**

In accordance with Bank of Lao PDR's (BOL) latest advise on 7th September 2018, all the remaining retail accounts post retail product and service closure from 30th March 2018 will be remained under ANZ Laos' Administration only until 30th March 2021. After that, all remaining balance from the Retail Accounts would be transferred to Bank of Lao P.D.R, where customers would not be eligible to withdraw back the money.

15. **How does this impact ANZ Laos' Institutional Banking Business?**

This closure of ANZ's Retail products and services in Laos has **NO** impact to our Institutional business and customers.

The **ANZ Service Counter** located at ANZ Laos Commercial Building, 33 Lane Xang Avenue, Hatsady village, Chanthabury district, Vientiane Capital, Lao PDR will be available to provide cash and counter services to ANZ Laos' Institutional clients. ANZ Laos' remaining office and its electronic banking are operating as normal to serve ANZ Laos' Institutional clients.

For more details, please contact your dedicated Relationship Manager.

**ແຈ້ງການກ່ຽວກັບ ຜະລິດຕະພັນແລະການບໍລິການລູກຄ້າລາຍຍ່ອຍຂອງທະນາຄານເອເອັນແຊັດລາວຈໍາກັດ**

**ຫົວຂໍ້ທີ່ສໍາຄັນ:**

- ໃນວັນທີ 08 ກຸມພາ 2018, ທະນາຄານ ເອເອັນແຊັດ ລາວ ຈໍາກັດ ແຈ້ງການກ່ຽວກັບການຢຸດເຊົາ ຜະລິດຕະພັນແລະການບໍລິການສໍາລັບລູກຄ້າລາຍຍ່ອຍໃນລາວ ເພື່ອສຸມໃສ່ການໃຫ້ບໍລິການລູກຄ້າ ປະເພດທຸລະກິດໃນລາວ.
- ການຕັດສິນໃຈນີ້ແມ່ນເພື່ອໃຫ້ສອດຄ່ອງກັບຍຸດທະສາດທາງທຸລະກິດທີ່ພົ້ນເດັ່ນຂອງກຸ່ມທະນາຄານເອ ເອັນແຊັດ ໃນການເປັນທະນາຄານທີ່ງ່າຍໃນການເຂົ້າເຖິງ, ປັບປຸງການນໍາໃຊ້ຕົ້ນທຶນຢ່າງມີ ປະສິດທິພາບ, ແລະເຮັດໃຫ້ເຮົາສາມາດສຸມໃສ່ການບໍລິການລູກຄ້າປະເພດທຸລະກິດໃນລາວຕາມຍຸດ ທະສາດຂອງກຸ່ມທະນາຄານເອເອັນແຊັດໃນພາກພື້ນອາຊີ.
- ການຢຸດເຊົາຜະລິດຕະພັນແລະການບໍລິການລູກຄ້າລາຍຍ່ອຍໃນຄັ້ງນີ້ບໍ່ມີຜົນກະທົບໃດໆຕໍ່ການ ບໍລິການລູກຄ້າປະເພດທຸລະກິດຂອງເອເອັນແຊັດໃນລາວ, ພວກເຮົາປະສົບຜົນສໍາເລັດຢ່າງຫຼວງຫຼາຍທີ່ ຜ່ານມາໃນລາວ ແລະ ຍັງຈະສືບຕໍ່ໃຫ້ບໍລິການລູກຄ້າປະເພດທຸລະກິດຢ່າງເຕັມທີ່.
- ເອເອັນແຊັດ ຈະສືບຕໍ່ພັດທະນາຜະລິດຕະພັນແລະການບໍລິການທີ່ເປັນມາດຕະຖານສາກົນເພື່ອຮັບໃຊ້ ບັນດາທຸລະກິດລະຫວ່າງປະເທດແລະຫົວໜ່ວຍທຸລະກິດໃຫຍ່ໆໃນລາວ.
- ອີງຕາມການຊີ້ນໍາ ຈາກທະນາຄານແຫ່ງ ສ.ປ.ປ ລາວ ວັນທີ 7 ກັນຍາ 2018, ບັນຊີລາຍຍ່ອຍທີ່ຄົງ ຄ້າງທັງໝົດພາຍຫຼັງ ຢຸດການໃຫ້ບໍລິການສິນຄ້າ ແລະ ການບໍລິການລາຍຍ່ອຍ ຫຼັງຈາກ ວັນທີ 30 ມີນາ 2018, ການບໍລິຫານບັນຊີຄົງຄ້າງທັງໝົດຈະຢູ່ພາຍໃຕ້ ທະນາຄານເອເອັນແຊັດ ໄປຈົນເຖິງ 30 ມີນາ 2021 ເທົ່ານັ້ນ. ພາຍຫຼັງຈາກນັ້ນ, ບັນຊີຄົງຄ້າງດັ່ງກ່າວ ຈະຖືກໂອນໄປພ້ອມກັບຍອດຄົງຄ້າງ ທັງໝົດໄປຫາ ທະນາຄານແຫ່ງ ສ.ປ.ປ ລາວ, ເຊິ່ງຖ້າເຖິງເວລານັ້ນ ລູກຄ້າຈະບໍ່ສາມາດຖອນເອົາເງິນ ຄືນໄດ້. ພວກເຮົາຢາກຖືໂອກາດນີ້ ແຈ້ງເຕືອນມາຍັງເຈົ້າຂອງບັນຊີຄົງຄ້າງທັງໝົດ ໃຫ້ຕິດຕໍ່ຫາ ເອ ເອັນແຊັດ ທາງ +856 21 222 700 ຫຼື Clientservices.laos@anz.com ແລະ ເຂົ້າມາປ່ອງ ບໍລິການຂອງພວກເຮົາ ທີ່ ຕຶກທະນາຄານ ວຽງຈັນພານິດ, ຖະໜົນ 33 ລ້ານຊ້າງ, ບ້ານຫັດສະດີ, ເມືອງຈັນທະບູລີ, ນະຄອນຫຼວງວຽງຈັນ, ສ.ປ.ປ.ລາວ ເພື່ອດໍາເນີນການປິດບັນຊີຂອງທ່ານ.
- ການແຈ້ງການນີ້ແມ່ນສືບຕໍ່ຈາກການແຈ້ງການໃນເດືອນຕຸລາ 2016 ຂອງການຂາຍ ທຸລະກິດການ ບໍລິການລູກຄ້າລາຍຍ່ອຍແລະການບໍລິການຄວາມໝັ້ນຄົງທາງການເງິນຂອງເອເອັນແຊັດໃນ5ປະເທດ ອາຊຽນໃຫ້ກັບທະນາຄານພັດທະນາສິງກະໂປ, ແລະຫຼັງຈາກນັ້ນແມ່ນການຢຸດໃຫ້ບໍລິການລູກຄ້າລາຍ ຍ່ອຍໃນ ຫວຽດນາມ ແລະ ຟີລິບປິນສ.

**ຄໍາຖາມທີ່ຖືກຖາມເປັນປະຈໍາ:**

1. **ທຸລະກິດດ້ານອື່ນຂອງເອເອັນແຊັດກໍ່ຈະຖືກຢຸດການດຳເນີນງານບໍ່?**

   ບໍ່, ເອເອັນແຊັດ ຈະຢຸດເຊົາຜະລິດຕະພັນແລະການບໍລິການລູກຄ້າລາຍຍ່ອຍໃນລາວເທົ່ານັ້ນ

2. **ເອເອັນແຊັດກຳລັງຈະຖອນການລົງທຶນໃນລາວບໍ່?**

   ບໍ່, ເອເອັນແຊັດຍັງສືບຕໍ່ໃຫ້ການບໍລິການເຕັມຮູບແບບແກ່ລູກຄ້າປະເພດທຸລະກິດໃນລາວ, ເອເອັນແຊັດ ຈະສືບຕໍ່ພັດທະນາຜະລິດຕະພັນແລະການບໍລິການທີ່ເປັນມາດຕະຖານສາກົນເພື່ອຮັບໃຊ້ບັນດາທຸລະກິດລະຫວ່າງປະເທດແລະຫົວໜ່ວຍທຸລະກິດໃຫຍ່ໆໃນລາວ.

3. **ການຢຸດຜະລິດຕະພັນແລະການໃຫ້ບໍລິການລູກຄ້າລາຍຍ່ອຍໃນລາວມີຜົນກະທົບຕໍ່ທ່ານແນວໃດ?**

   ມື້ສຸດທ້າຍຂອງການໃຫ້ບໍລິການການທະນາຄານສຳລັບລູກຄ້າລາຍຍ່ອຍແມ່ນວັນສຸກ ທີ 30 ມີນາ 2018. ເຊິ່ງທ່ານຄວນຊອກຫາຊ່ອງທາງໃນການເປີດບັນຊີກັບທະນາຄານໃໝ່ແລະປິດບັນຊີກັບທະນາຄານຂອງພວກເຮົາກ່ອນວັນທີ່ 23 ມີນາ 2018 ເພື່ອໃຫ້ແນ່ໃຈວ່າການເຮັດທຸລະກຳຂອງທ່ານຈະຖືກບໍລິການໂດຍໄວ. ນອກນີ້ເພື່ອຄວາມສະດວກສະບາຍຂອງທ່ານພວກເຮົາຍັງຊ່ວຍແນະນຳທ່ານກັບຕົວແທນຂອງທະນາຄານການຄ້າຕ່າງປະເທດລາວມະຫາຊົນເພື່ອທີ່ຈະໃຫ້ລາຍລະອຽດກ່ຽວກັບຜະລິດຕະພັນແລະການບໍລິການຂອງພວກເຂົາເພື່ອເພີ່ມຄວາມສະດວກໃຫ້ທ່ານເປັນອີກທາງເລືອກໃນການເປີດບັນຊີໃໝ່.

   ເພື່ອໃຫ້ການບໍລິການມີຄວາມວ່ອງໄວຂຶ້ນ ພວກເຮົາຂໍອານຸຍາດແນະນຳໃຫ້ລູກຄ້ານັດໝາຍວັນທີແລະເວລາທີ່ລູກຄ້າຈະເຂົ້າມາປິດບັນຊີກັບພະນັກງານຂອງພວກເຮົາລ່ວງໜ້າ ໂດຍສາມາດຕິດຕໍ່ພວກເຮົາໄດ້ທາງເບີ +856 30 7738434-8 ຫຼື ອີເມວ Clientservices.Laos@anz.com

   ລາຍລະອຽດກ່ຽວກັບການບໍລິການຕັ້ງແຕ່ມື້ນີ້ຈົນຮອດມື້ສຸດທ້າຍທີ່ເຮົາບໍລິການລູກຄ້າລາຍຍ່ອຍໃນລາວມີດັ່ງລຸ່ມນີ້:

| **ເລີ່ມຈາກວັນທີ** | **ບໍລິການທີ່ຈະເລີ່ມໃຊ້ບໍ່ໄດ້** |
|---|---|
| 23 ມີນາ 2018 (ເລີ່ມຈາກ 17ໂມງແລງ) | ການຝາກເງິນ, ການຝາກແຊັກ, ການໂອນເງິນພາຍໃນແລະຕ່າງປະເທດ ຈະບໍ່ສາມາດໃຫ້ການບໍລິການໄດ້<br>ການໂອນເງິນອອກຈາກບັນຊີຫຼັງຈາກວັນທີ່ 23ມີນາ 2018 ແມ່ນຈະບໍລິການສະເພາະລູກຄ້າທີ່ໂອນອອກເພື່ອປິດບັນຊີເທົ່ານັ້ນ<br>ການບໍລິການແບບ Standing instruction ຈະບໍ່ສາມາດປະຕິບັດຕາມໄດ້<br>ທ່ານຈະບໍ່ສາມາດນຳໃຊ້ການໃຫ້ບໍລິການດ້ານຕູ້ນິລະໄພໄດ້ |
| 23 ມີນາ 2018 (ເລີ່ມຈາກ 17 | ການຖອນເງິນຜ່ານຕູ້ເອທີເອັມຈະບໍ່ສາມາດເຮັດໄດ້<br><br>ບັດເດບິດວີຊ້າ, ການຊື້ເຄື່ອງອອນລາຍ ຫຼື ເຮັດທຸລະກຳທາງເອເລັກໂຕຣນິກຈະບໍ່ສາມາດເຮັດໄດ້ |

| | |
|---|---|
| ໂມງ ແລງ) | |
| ວັນສຸກ, 30 ມີນາ 2018 (ຈາກ 17ໂມງ ແລງ) | ເປັນມື້ສຸດທ້າຍຂອງການໃຫ້ບໍລິການລູກຄ້າລາຍຍ່ອຍຂອງທະນາຄານເອ ເອັນແຊັດລາວ |

__ໝາຍເຫດ:__ ທະນາຄານເອເອັນແຊັດ ຈະໃຫ້ການບໍລິການໃນການຖອນເງິນ, ໂອນເງິນເພື່ອປິດບັນຊີ ຈົນເຖິງເວລາ 17ໂມງແລງ ຂອງວັນທີ່ 30 ມີນາ 2018 ນີ້ເທົ່ານັ້ນ.
ກະລຸນານຳບັດປະຈຳໂຕ, ພາສປອດ ຫຼື ສຳມະໂນຄົວ ມາພ້ອມເວລາທ່ານເຂົ້າມາປິດບັນຊີ.

4. **ເອເອັນແຊັດກຳລັງຂາຍທຸລະກິດການບໍລິການການທະນາຄານສຳລັບລູກຄ້າລາຍຍ່ອຍໃຫ້ທະນາຄານການຄ້າຕ່າງປະເທດລາວມະຫາຊົນບໍ່?**

ບໍ່, ພວກເຮົາພຽງແຕ່ຢຸດການໃຫ້ບໍລິການການທະນາຄານສຳລັບລູກຄ້າລາຍຍ່ອຍເທົ່ານັ້ນ, ການປະສານງານກັບ ທະນາຄານການຄ້າຕ່າງປະເທດລາວມະຫາຊົນ ເປັນພຽງການອຳນວຍຄວາມສະດວກໃຫ້ກັບລູກຄ້າແລະເພື່ອຫຼຸດຜ່ອນຜົນກະທົບທີ່ມີຕໍ່ພວກເຂົາເທົ່ານັ້ນ

5. **ຈະມີຜົນກະທົບແນວໃດຕໍ່ບັນຊີເງິນຝາກມີກຳນົດຂອງຂ້ອຍ?**

ພະນັກງານຂອງເຮົາຈະຕິດຕໍ່ທ່ານເພື່ອບອກກ່າວກ່ຽວກັບມື້ຮອດກຳນົດການປິດບັນຊີຂອງທ່ານ, ໂດຍທີ່ທ່ານສາມາດປິດບັນຊີກ່ອນກຳນົດໂດຍທີ່ບໍ່ມີການປັບໄໝຫຼືລາຍຈ່າຍອື່ນໆ.

ການຄິດໄລ່ດອກເບ້ຍແມ່ນກຳນົດເອົາຮອດມື້ທີ່ທ່ານປິດບັນຊີກັບທະນາຄານຂອງພວກເຮົາ

ບັນຊີເງິນຝາກມີກຳນົດທີ່ມີຢູ່ໃນປະຈຸບັນຈະບໍ່ມີການຕໍ່ອາຍຸອອກໄປຕື່ມຫຼັງຈາກວັນທີ 08 ກຸມພາ 2018, ເອເອັນແຊັດຈະບໍ່ຮັບເປີດບັນຊີໃໝ່ຫຼັງຈາກວັນທີ 08 ກຸມພາ 2018.

6. **ຂ້ອຍຄວນເຮັດແນວໃດຫາກວ່າມີການໂອນເງິນມາຫາບັນຊີຂອງຂ້ອຍໃນເອເອັນແຊັດ?**

ຖ້າທ່ານຄາດຄະເນວ່າຈະມີເງິນໂອນຫຼື ເງິນຝາກ ເຂົ້າຫາບັນຊີຂອງທ່ານ, ທ່ານຄວນຕິດຕໍ່ຜູ້ທີ່ຈະໂອນຫຼືຝາກເງິນ ເຊັ່ນ: ຄູ່ຄ້າ, ຜູ້ຮ່ວມທຸລະກິດ ຫຼື ຍາດພີ່ນ້ອງ... ໃຫ້ໂອນຫຼືຝາກເຂົ້າບັນຊີຂອງທ່ານກ່ອນວັນທີ 23 ມີນາ 2018, ທະນາຄານເອເອັນແຊັດລາວຈະບໍ່ຮັບເງິນໂອນ ຫຼື ເງິນຝາກໃດໆທັງນັ້ນຫຼັງຈາກ 17 ໂມງແລງ ຂອງວັນທີ 23 ມີນາ 2018.

ພວກເຮົາຂໍແນະນຳທ່ານໃຫ້ແຈ້ງຜູ້ທີ່ຈະໂອນຫຼືຝາກເງິນເຂົ້າບັນຊີຂອງທ່ານ ໃຫ້ໂອນຫຼືຝາກເຂົ້າບັນຊີຂອງທ່ານໃນທະນາຄານອື່ນ. ແລະກະລຸນາແຈ້ງບອກໃຫ້ພວກເຂົາປ່ຽນແປງລາຍລະອຽດບັນຊີການຮັບເງິນຈາກທະນາຄານຂອງພວກເຮົາເປັນທະນາຄານອື່ນໂດຍໄວ.

7. **ຂ້ອຍຍັງສາມາດໃຊ້ເຊັກຂອງເອເອັນແຊັດບໍ່? ຂ້ອຍຕ້ອງເຮັດແນວໃດກັບແຊັກທີ່ຂ້ອຍກຳນົດວັນທີໃນການຖອນເງິນລ່ວງໜ້າ?**

   ແຊັກເອເອັນແຊັດທີ່ຖືກສັ່ງຈ່າຍຈາກບັນຊີບຸກຄົນ ຈະສາມາດຖອນເງິນໄດ້ຮອດເວລາ 17ໂມງແລງຂອງວັນທີ 30 ມີນາ 2018 ເທົ່ານັ້ນ.

   ຖ້າຫາກທ່ານປິດບັນຊີກ່ອນວັນທີ 30 ມີນາ 2018 ແລະ ໄດ້ອອກແຊັກການສັ່ງຈ່າຍແບບກຳນົດມື້ໂດຍມື້ທີ່ກຳນົດແມ່ນຫຼັງເປັນວັນທີຫຼັງຈາກປິດບັນຊີກັບເອເອັນແຊັດແລ້ວ ແມ່ນກະລຸນາຕິດຕໍ່ຜູ້ຮັບແຊັກຂອງທ່ານແລ້ວປ່ຽນແທນດ້ວຍໃບແຊັກຂອງທະນາຄານອື່ນ.

   ກະລຸນາສົ່ງຄືນປຶ້ມແຊັກຂອງທ່ານຫຼັງຈາກທີ່ທ່ານປິດບັນຊີກັບທາງເອເອັນແຊັດແລ້ວ.

8. **ຂ້ອຍຍັງສາມາດຖອນເງິນຜ່ານຕູ້ເອທີເອັມໄດ້ບໍ່?**

   ຕູ້ເອທີເອັມຂອງທະນາຄານເອເອັນແຊັດຈະບໍ່ສາມາດນຳໃຊ້ໄດ້ຫຼັງຈາກເວລາ 17ໂມງ ຂອງວັນທີ 23 ມີນາ 2018.

   ກະລຸນາພົວພັນປ່ອງບໍລິການຂອງສາຂານະຄອນຫຼວງວຽງຈັນເພື່ອຖອນເງິນແລະປິດບັນຊີຂອງທ່ານກ່ອນ 17ໂມງ ຂອງວັນທີ 30 ມີນາ 2018.

9. **ທ່ານຍັງສາມາດໃຊ້ບັດ ວີຊ້າ ເດບິດ ຂອງທະນາຄານເອເອັນແຊັດໄດ້ບໍ່? ແລະຈະເຮັດແນວໃດກັບຄ່າບໍລິການລາຍປີທີ່ທ່ານຈ່າຍລ່ວງໜ້າໄປແລ້ວ?**

   ບັດ ເອເອັນແຊັດ ວີຊ້າ ເດບິດຈະບໍ່ສາມາດໃຊ້ໄດ້ຫຼັງຈາກເວລາ 17 ໂມງ ຂອງວັນທີ 23 ມີນາ 2018.

   ຄ່າບໍລິການລາຍປີຂອງບັດ ວີຊ້າ ເດບິດ ທີ່ທ່ານຈ່າຍລ່ວງໜ້າໄປແລ້ວນັ້ນຍອດຂອງຈຳນວນມື້ທີ່ບໍ່ທັນໄດ້ໃຊ້ຈະຖືກໂອນເຂົ້າບັນຊີຂອງທ່ານໃນມື້ທີ່ທ່ານມາປິດບັນຊີ ແລະ ເຂົ້າມາພົວພັນນຳປ່ອງບໍລິການຂອງສາຂານະຄອນຫຼວງວຽງຈັນກ່ອນ 17 ໂມງຂອງວັນທີ 30 ມີນາ 2018.

10. **ຖ້າທ່ານມີຄຳສັ່ງກ່ຽວກັບ Standing Instruction ຫຼື Reoccurring payment ກ່ຽວກັບບັນຊີຂອງທ່ານ, ເອເອັນແຊັດຈະຍັງໃຫ້ບໍລິການກ່ຽວກັບຂໍ້ດນີ້ບໍ່?**

    ເອເອັນແຊັດ ຈະບໍ່ເຮັດທຸລະກຳກ່ຽວກັບ Standing Instruction ທີ່ຕິດພັນກັບບັນຊີຂອງທ່ານຫຼັງຈາກວັນທີ 23 ມີນາ 2018, ພວກເຮົາແນະນຳໃຫ້ທ່ານກະກຽມການເປີດບັນຊີກັບທະນາຄານອື່ນເພື່ອບໍລິການທ່ານໃນດ້ານນີ້.

11. **ຍັງມີບໍລິການດ້ານໃດແດ່ທີ່ຍັງສາມາດໃຊ້ໄດ້ໃນມື້ທີ່ທ່ານມາປິດບັນຊີກັບເອເອັນແຊັດ**

    ທ່ານສາມາດເລືອກການໃຫ້ບໍລິການໄດ້ດັ່ງນີ້: ໂອນເງິນໄປຕ່າງປະເທດ, ໂອນເງິນພາຍໃນປະເທດ ແລະ ຖອນເງິນສົດ.

    ກະລຸນາແຈ້ງປ່ອງບໍລິການຂອງພວກເຮົາລ່ວງໜ້າ24ຊົ່ວໂມງ ຖ້າຫາກທ່ານຈະຖອນເງິນຫຼາຍກ່ວາ 80ລ້ານກີບ ຫຼື ມູນຄ່າທຽບເທົ່າໃນສະກຸນເງິນອື່ນ.

    ພວກເຮົາຈະຍົກເວັ້ນຄ່າທຳນຽມໃນການໂອນເງິນໄປຕ່າງປະເທດ ແລະ ໂອນເງິນພາຍໃນປະເທດໄປຍັງບັນຊີທີ່ມີຊື່ດຽວກັນ.

ໝາຍເຫດ: ການເຮັດທຸລະກຳທັງໝົດລວມທັງເອກະສານປະກອບການໂອນເງິນແມ່ນຍັງຕ້ອງໄດ້ປະຕິບັດຕາມກົດລະບຽບທີ່ທາງທະນາຄານແຫ່ງ ສ.ປ.ປ ລາວ ວາງອອກ ແລະ ຕາມລະບຽບການຂອງທະນາຄານເອເອັນແຊັດ.

12. **ເປັນຫຍັງຈຶ່ງຕ້ອງປິດບັນຊີກ່ອນວັນທີ່ 23 ມີນາ 2018 ໃນຂະນະທີ່ມື້ສຸດທ້າຍຂອງການໃຫ້ບໍລິການຜະລິດຕະພັນແລະການບໍລິການລູກຄ້າລາຍຍ່ອຍຂອງເອເອັນແຊັດລາວແມ່ນວັນທີ່ 30 ມີນາ 2018?**

ເນື່ອງຈາກພວກເຮົາຕ້ອງໄດ້ໃຊ້ເວລາໃນການຍົກເລີກທຸລະກຳອື່ນໆທີ່ກ່ຽວຂ້ອງກັບບັນຊີຂອງລູກຄ້າເຊັ່ນ: ການຊຳລະສະສາງ, ການບໍລິການດ້ານເອເລັກໂຕນິກຕ່າງໆ, ຮຽກເກັບປື້ມແຊັກ ແລະ ອື່ນໆທີ່ກ່ຽວຂ້ອງກັບບັນຊີຂອງທ່ານ.

13. **ຂ້ອຍສາມາດຕິດຕໍ່ປ່ອງບໍລິການຂອງທະນາຄານໄດ້ແນວໃດ**

ທ່ານສາມາດພົວພັນປ່ອງບໍລິການສາຂານະຄອນຫຼວງຂອງພວກເຮົາໄດ້ທີ່ 33 ຖະໜົນລ້ານຊ້າງ, ບ້ານຫັດສະດີ, ເມືອງຈັນທະບູລີ, ນະຄອນຫຼວງວຽງຈັນ, ສ.ປ.ປ ລາວ.
ນອກນີ້ ພວກເຮົາເຂົ້າໃຈເຖິງຄວາມສຳຄັນຂອງການແຈ້ງການນີ້ຕໍ່ບັນດາທ່ານ ສະນັ້ນເພື່ອໃຫ້ໝັ້ນໃຈວ່າທະນາຄານເອເອັນແຊັດຈະເຮັດທຸກຢ່າງເພື່ອໃຫ້ການບໍລິການລູກຄ້າໄດ້ດີຂຶ້ນກ່ວາເກົ່າໂດຍການເພີ່ມເວລາການໃຫ້ບໍລິການຈາກ 15.30 ເປັນ 17.00 ແຕ່ວັນຈັນຫາວັນສຸກ ແລະຍັງເປີດໃຫ້ບໍລິການວັນເສົາແຕ່ເວລາ 9.00 ຫາ 13.00 ອີກດ້ວຍ ຈົນເຖິງວັນທີ່ 30 ມີນາ 2018.

| **ຊ່ວງເວລາທີ່ໃຫ້ບໍລິການ** | **ການບໍລິການ** | **ໝາຍເຫດ** |
|---|---|---|
| **ວັນຈັນຫາວັນສຸກ** | | |
| 8.30 ຫາ 17.00 | ປ່ອງບໍລິການຖອນເງິນ, ໂອນເງິນ ແລະ ຖອນແຊັກ<br><br>ການດຳເນີນການປິດບັນຊີ<br><br>ໃຫ້ຂໍ້ມູນທົ່ວໄປທີ່ບໍ່ກ່ຽວກັບປ່ອງບໍລິການ | ເວລາຂອງການປິດການເຮັດທຸລະກຳຍັງບໍ່ມີການປ່ຽນແປງ. ການເຮັດທຸລະກຳອື່ນໆຫຼັງຈາກເວລາການປິດເຮັດທຸລະກຳແມ່ນຈະໄດ້ດຳການໃນມື້ຕໍ່ໄປ |
| ວັນເສົາ | | |
| 9.00 ຫາ 13.00 | ປ່ອງບໍລິການຖອນເງິນ, ໂອນເງິນ ແລະ ຖອນແຊັກ, ແລະການໃຫ້ຂໍ້ມູນທົ່ວໄປທີ່ບໍ່ກ່ຽວກັບປ່ອງບໍລິການ<br><br>ການດຳເນີນການປິດບັນຊີ | ຄຳຮ້ອງຂໍເຮັດທຸລະກຳການໂອນເງິນຂອງລູກຄ້າແມ່ນຈະຖືກດຳເນີນການໃນມື້ທຳມະດາ (ວັນຈັນ ຫາ ວັນສຸກ) |

ນອກນີ້ທ່ານສາມາດຕິດຕໍ່ພວກເຮົາໄດ້ທາງ Clientservices.Laos@anz.com ຫຼື ໂທຫາເບີ 021 222 700.

**14. ຈະເກີດຫຍັງຂຶ້ນຖ້າຂ້ອຍບໍ່ຢາກປິດບັນຊີ?**

ອີງຕາມການຊີ້ນໍາ ຈາກທະນາຄານແຫ່ງ ສ.ປ.ປ ລາວ ວັນທີ 7 ກັນຍາ 2018, ບັນຊີລາຍຍ່ອຍທີ່ຄົງຄ້າງທັງໝົດພາຍຫຼັງ ຢຸດການໃຫ້ບໍລິການສິນຄ້າ ແລະ ການບໍລິການລາຍຍ່ອຍ ຫຼັງຈາກວັນທີ 30 ມີນາ 2018, ການບໍລິຫານບັນຊີຄົງຄ້າງທັງໝົດຈະຢູ່ພາຍໃຕ້ ທະນາຄານເອເອັນແຊັດໄປຈົນເຖິງ 30 ມີນາ 2021 ເທົ່ານັ້ນ. ພາຍຫຼັງຈາກນັ້ນ, ບັນຊີຄົງຄ້າງດັ່ງກ່າວ ຈະຖືກໂອນໄປພ້ອມກັບຍອດຄົງຄ້າງທັງໝົດໄປຫາ ທະນາຄານແຫ່ງ ສ.ປ.ປ ລາວ, ເຊິ່ງຖ້າເຖິງເວລານັ້ນ ລູກຄ້າຈະບໍ່ສາມາດຖອນເອົາເງິນຄືນໄດ້.

**15. ມັນມີຜົນກະທົບແນວໃດຕໍ່ກັບລູກຄ້າປະເພດທຸລະກິດແລະລູກຄ້າທຸລະກິດການຄ້າລະຫວ່າງປະເທດຂອງເອເອັນແຊັດ.**

ການຢຸດເຊົາການບໍລິການຜະລິດຕະພັນແລະບໍລິການລູກຄ້າລາຍຍ່ອຍໃນລາວຄັ້ງນີ້ແມ່ນບໍ່ມີຜົນກະທົບຕໍ່ລູກຄ້າປະເພດທຸລະກິດແລະລູກຄ້າທຸລະກິດການຄ້າລະຫວ່າງປະເທດຂອງທະນາຄານ. ເຮົາມີປ່ອງບໍລິການສໍາລັບລູກຄ້າ ລູກຄ້າປະເພດທຸລະກິດແລະລູກຄ້າທຸລະກິດການຄ້າລະຫວ່າງປະເທດຂອງທະນາຄານ ເພື່ອເຮັດທຸລະກໍາກ່ຽວກັບການເງິນທີ່ ອາຄານພານິດຂອງເອເອັນແຊັດຕັ້ງຢູ່ຖະໜົນລ້ານຊ້າງ ບ້ານຫັດສະດີ ເມືອງຈັນທະບຸລີ ນະຄອນຫຼວງວຽງຈັນ.

ລາຍລະອຽດເພີ່ມເຕີມແມ່ນທ່ານສາມາດຕິດຕໍ່ຫາພະແນກບໍລິການລູກຄ້າປະເພດທຸລະກິດແລະລູກຄ້າທຸລະກິດການຄ້າລະຫວ່າງປະເທດຂອງທະນາຄານໄດ້.